# <u>ວິທີສຶກສາພຣະຄຳພີ</u>

ວິທີສຶກສາພຣະຄຳພີສ່ວນຫລາຍຈະເນັ້ນເຖິງວ່າ ພຣະຄຳພີເວົ້າຫຍັງແລະມີຄວາມໝາຍຢ່າງໃດ. ແຕ່ພຣະຄຳພີສ່ວນໃຫ່ຍຈະເຕັມໄປດ້ວຍຫລັກການທີ່ສາມາດໃຊ້ໃນຊີວິດປະຈຳວັນ. ທ່ານຄວນຈະໃຊ້ເວລາສ່ວນຫລາຍໃນການນຳໄປປະຕິບັດ.

ຈົ່ງໃຊ້ເວລາສຶກສາຂໍ້ຄວາມບາງຕອນໃນພຣະທັມແລະໃຊ້ເວລາໃນການພິຈາຣະນາ ແລະ ອະທິຖານວ່າທ່ານຈະນຳຄວາມຈິງໄປໃຊ້ໃນຊີວິດຢ່າງໃດ? ການສົນທະນາແລກປ່ຽນຄວາມຄິດເຫັນຂອງທ່ານກັບຄົນອື່ນໆຈະປຸກໃຈທ່ານໃຫ້ມີຄວາມຮັກແລະໃຫ້ເຮັດການດີງາມ (ເຮັບເຣີ 10:24-25).

## I. <u>ການສັງເກດທົ່ວໄປ</u> (ພຣະທັມພາກສ່ວນນີ້ເວົ້າເຖິງຫຍັງ?)

"ພຣະທັມສ່ອງແສງສວ່າງ. ພຣະທັມສາມາດສ່ອງຜ່ານຂີ້ເຝືອ ຂອງຄວາມຫລອກລວງ ແລະຊ່ວຍໃຫ້ເຮົາຮູ້ຈັກຄວາມຈິງ. ແຕ່ທ່ານຕ້ອງມີຄວາມກ້າຫານທີ່ຈະກ້າວໄປສູ່ແສງສວ່າງ" (ຈີມ ປີເຕີສັນ)

### -ພຣະຄຳພີໄດ້ຜ່ານການແປມາຫລາຍໆຮູບ

ພຍາຍາມອ່ານພຣະທັມແຕ່ລະພາກ ຫລາຍໆຄັ້ງ ພຍາຍາມໃຊ້ພຣະຄຳພີຫລາຍໆຊະນິດ ( NIV, NASB, NKJV, The LIVING BIBLE, etc) ເພື່ອຈະໄດ້ເຫັນຄວາມແຕກຕ່າງ, ນອກຈາກນັ້ນມັນຈະຊ່ວຍໃຫ້ທ່ານໄດ້ເຫັນຄວາມສຳຄັນບາງຄຳ ແລະ ຊ່ວຍເພີ້ມຄວາມເຂົ້າໃຈຢ່າງຊາບຊື້ງໃນພາກພຣະທັມທີ່ທ່ານກຳລັງສຶກສາຢູ່.

### -ບົດຄວາມແຕ່ລະຕອນມີສ່ວນພົວພັນກັນ

*ຕອບຄຳຖາມດັ່ງຕໍ່ໄປນີ້ແລະບັນທຶກໄວ້:

1. ໃຜເປັນຄົນຂຽນແລະ ໃຜເປັນຄົນເວົ້າ ແລະເວົ້ານຳໃຜ? ຄວາມສຳພັນຂອງຂະເຈົ້າມີບໍ່?
2. ຂະເຈົ້າເວົ້າເຣື້ອງຫຍັງກັນ? ມີຫຍັງແດ່ເກີດຂື້ນ?
3. ເຫດການ ຫລື ການໂອ້ລົມ ເກີດຂື້ນຢູ່ໃສ?
4. ເຫດການທີ່ເກີດຂື້ນນີ້ ມີຄວາມສຳພັນຫຍັງກັບເຫດການສຳຄັນອື່ນໆ ໃນພຣະຄຳພີ?
5. ເປັນຫຍັງຄົນທີ່ກຳລັງເວົ້າຈຶ່ງເວົ້າແນວນັ້ນ? ລາວກຳລັງພົບກັບບັນຫາແນວໃດແດ່?
6. ຂໍ້ຄວາມຕອນນີ້ສອດຄ່ອງກັບບົດຄວາມສ່ວນໃຫ່ຍບໍ່? ມີຫຍັງເກີດຂື້ນກ່ອນໜ້ານີ້ ຫລື ຫລັງຈາກນີ້? ພຣະເຈົ້າກຳລັງເວົ້າຫຍັງກັບທ່ານ?

### -ເບິ່ງໂຄງຮ່າງ ແລະ ການຈັດຕັ້ງຂອງພາກສ່ວນຕ່າງໆ

ສັງເກດເບິ່ງໂຄງຮ່າງຂອງພາກສ່ວນທີ່ກຳລັງສຶກສາຢູ່ ແລະຊອກຫາ <u>ຄຳສັບ</u> ທີ່ໃຊ້ໃນການຕິດຕໍ່ພາກສ່ວນຕ່າງໆ

ໃຫ້ເຂົ້າກັນ (ເຊັ່ນຄຳວ່າ....ເພາະສັນນັ້ນ, ແຕ່ວ່າ, ແລະ, ເປັນຕົ້ນ) ລອງອ່ານພາກສ່ວນນັ້ນໆອີກໂດຍ ປ່ຽນເປັນຄຳເວົ້າຂອງທ່ານເອງ. ສັງເກດເບິ່ງຄວາມສຳພັນທີ່ຈະຊ່ວຍໃຫ້ທ່ານເຂົ້າໃຈຈຸດເນັ້ນໜັກຂອງຜູ້ຂຽນ.

## -ສຶກສາຄຳເວົ້າທີ່ສຳຄັນ

ບັນທຶກ ຄຳເວົ້າ ທີ່ສຳຄັນ ແລະສຶກສາເບິ່ງຄຳນັ້ນໆໂດຍການໃຊ້ວັຈນານຸກົມທີ່ໃຫ້ຄວາມໝາຍສຳລັບສັພຕ່າງໆໃນພຣະຄຳພີ ( Vine's Expository Dictionary, Richard's Expository Dictionary of Bible words, or Niv study Bible)

## -ຄຳຖາມທີ່ຕ້ອງຖາມຕົວເອງ

ຂຽນແລະຕອບຄຳຖາມເຫລົ່ານີ້ເວລາທ່ານອ່ານພຣະທັມແຕ່ລະປະໂຍກ:

1. ມີພຣະບັນຍັດແນວໃດທ່ານຈະຕ້ອງເຊື່ອຟັງ?
2. ມີພຣະສັນຍາແນວໃດທີ່ທ່ານເຊື່ອວ່າພຣະເຈົ້າຈະຮັກສາ ຫຼື ກະທຳ ໄດ້?
3. ທ່ານໄດ້ຮູ້ຫຍັງແດ່ເຣື່ອງພຣະເຈົ້າ? ເຣື່ອງພຣະເຍຊູ?, ເຣື່ອງພຣະວິນຍານບໍຣິສຸດ?
4. ໃນປະໂຍກນີ້ມີຄຳເວົ້າຊ້ຳກັນບໍ່? ຄວາມຄິດຊ້ຳກັນບໍ່? ເນື້ອໃນຊ້ຳກັນບໍ່?
5. ມີເຣື່ອງປຽບທຽບ ຫລື ກົງກັນຂ້າມບໍ່? (ຕົວຢ່າງ: ເຣື່ອງເນື້ອໜັງ ແລະເຣື່ອງຈິດວິນຍານ ໃນ ໂຣມ 8)
6. ມີລາຍລະອຽດຫຍັງບໍ່? (ຕົວຢ່າງ: ລາຍລະອຽດ ກ່ຽວກັບ ຜົນຂອງພຣະວິນຍານ ໃນ ຄາລາເຕັຍ 5:22-23)
7. ມີຄວາມສຳພັນລະຫວ່າງ ເຫດການ ແລະ ຜົນສະທ້ອນ ບໍ່? (ໂຣມ 10:14-18)

# II. ການແປຄວາມໝາຍ (ພຣະທັມສ່ວນນີ້ມີຄວາມໝາຍແນວໃດ?)

## -ພຣະຄັມພີເຕັມໄປດ້ວຍຫລັກການຕ່າງໆ

ບັນທຶກ ຫລັກການຕ່າງໆທີ່ທ່ານເຫັນຫລັງຈາກສັງເກດເບິ່ງພຣະທັມແຕ່ລະພາກສ່ວນຖາມເຖິງຄວາມໝາຍຂອງແຕ່ລະພາກ. ສັງເກດເທື່ອລະປະໂຍກ; ບັນທຶກຄວາມເຂົ້າໃຈຂອງທ່ານແລະຖາມເລື້ອຍໆວ່າ "ມັນມີຄວາມໝາຍແນວໃດ?" ເປັນຫຍັງມັນຈຶ່ງສຳຄັນສຳລັບຄວາມເຂົ້າໃຈ? ມັນມີຄວາມໝາຍແນວໃດ? ສຳຫລັບຄົນສມັຍແຕ່ກ່ອນ? ກົງກັນຂ້າມກັບຄວາມຈິງນີ້ມີບໍ່? ຄວາມຈິງນີ້ຈະນຳໄປໃຊ້ເວລາໃດ? ຂ້າພະເຈົ້າຈະນຳຄວາມຈິງນີ້ໄປໃຊ້ໃນຊີວິດໄດ້ຢ່າງໃດ? ຊອກຫາຂໍ້ອ້າງອີງອື່ນໆ ທີ່ຈະຊ່ວຍໃຫ້ທ່ານຮູ້ຄວາມໝາຍຂອງພາກສ່ວນນີ້. ພຣະວິນຍານບໍຣິສຸດຂອງພຣະເຈົ້າຜູ້ເປັນຄຣູຊ່ວຍໃຫ້ທ່ານຮູ້ຈັກຄວາມຈິງ. ຈົ່ງອະທິຖານແລະຂໍໃຫ້ພຣະວິນຍານຊ່ວຍເປີດເຜີຍຄວາມຈິງໃຫ້ກັບທ່ານ.

## -ວັຈນານຸກົມທີ່ມີຄຳອະທິບາຍເຣື່ອງພຣະຄັມພີ

ຫລັງຈາກສຶກສາພຣະທັມດ້ວຍຕົວເອງແລ້ວ ພຍາຍາມເບິ່ງຄຳອະທິບາຍໃນວັຈນານຸກົມຕື່ມອີກ. ບາງຄັ້ງເຮົາອາດຈະພົບ ບາງຢ່າງທີ່ເຮົາຄິດບໍ່ເຖິງ, ໃຫ້ປຶກສາກັບຄຣູຫລືຜູ້ນຳເພື່ອຈະໄດ້ຄວາມຄິດເຫັນຂອງຂະເຈົ້າ ຊັກຊວນຄົນອື່ນໆ

ໃຫ້ສຶກສາຮ່ວມກັນກັບທ່ານ.

## -ຊອກຫາຫົວເຣື້ອງຂອງແຕ່ລະພາກສ່ວນ

ບັນທຶກຈຸດ ຫລື ຄວາມຄິດ ສຳຄັນທີ່ທ່ານຄິດວ່າຜູ້ຂຽນພຍາຍາມຢາກໃຫ້ທ່ານເຂົ້າໃຈ. ຂຽນຫລັກການຕ່າງໆທີ່ທ່ານສັງເກດໄດ້ແລ້ວແຕ່ງເປັນປະໂຍກເພື່ອທ່ານຈະໄດ້ເຫັນເນື້ອໃນທີ່ແທ້.

# III. ການນຳໄປປະຕິບັດ (ທ່ານຈະໃຫ້ພຣະທັມປ່ຽນແປງຊີວິດທ່ານຢ່າງໃດ?)

"ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປະໂຍດໃນການສອນ, ການກ່າວຕັກເຕືອນ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ, ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ" (2 ຕີໂມທຽວ 3:16-17)

## -ໃຊ້ໃນການສັ່ງສອນ

ຈົ່ງຖາມວ່າ "ຄວາມຈິງຂໍ້ນີ້ຈະປ່ຽນແປງຂ້າພະເຈົ້າ, ຄຣິສຈັກ, ຄອບຄົວ, ວຽກງານ ໄດ້ຢ່າງໃດ?"

## -ໃຊ້ໃນການກ່າວຕັກເຕືອນ

ຈົ່ງຖາມວ່າ, ຂ້າພະເຈົ້າບົກພອງບ່ອນໃດ? ເປັນຫຍັງຂ້າພະເຈົ້າຈຶ່ງບົກພ່ອງ? ເຮົາຈະສຳຣວດຕົວເອງໄດ້ຢ່າງໃດໃນກຸ່ມຂອງເຮົາ?

## -ໃຊ້ໃນການປັບປຸງແກ້ໄຂໃຫ້ຖືກຕ້ອງ

ຈົ່ງຖາມວ່າ "ຂ້າພະເຈົ້າຈະທຳຢ່າງໃດ? ຈະແກ້ໄຂຫຍັງ? ມີໃຜທີ່ຈະຊ່ວຍຂ້າພະເຈົ້າໄດ້?

## -ໃຊ້ໃນການອົບຮົມໃນທາງຊອບທັມ

ຈົ່ງຖາມວ່າ, ມີ ວິທີປະຕິບັດ, ຄວາມສຳພັນ, ແລະ ປະສົບການ ຫຍັງແດ່ ທີ່ຂ້າພະເຈົ້າຈະຕ້ອງທຳຕໍ່ໄປເພື່ອຂ້າພະເຈົ້າຈະຝຶກຝົນຕົວເອງໃຫ້ ເປັນຄຣິສຕຽນທີ່ດີ ແລະ ມີລັກສະນະຄ້າຍກັບພຣະເຢຊູຄຣິດ.

<u>Bibliography</u>:

Donahue, Bill. <u>The Willow Creek Guide to: Leading life-Changing Small Groups</u>. Grand Rapids: Zondervan Publishing House, 1996.